ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ເລກທີ 847 /ລບ

ນະຄອນຫຼວງວຽງຈັນ, ວັນທີ 29 / 12 / 25

# ດຳລັດ
# ວ່າດ້ວຍການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍການລົດໄຟ ສະບັບເລກທີ 62/ສພຊ, ລົງວັນທີ 17 ທັນວາ 2018;
- ອີງຕາມ ໜັງສືສະເໜີ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 251/ຍທຂ, ລົງວັນທີ 22 ເມສາ 2025.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ລົດໄຟ ໃນການຈັດຕັ້ງປະຕິບັດ ການປັບໃໝ ແລະ ມາດຕະການອື່ນ ຕໍ່ຜູ້ລະເມີດ ຢ່າງຖືກຕ້ອງ ແລະ ເຂັ້ມງວດ ແນໃສ່ຮັບປະກັນໃຫ້ການລົດໄຟ ມີຄວາມ ເປັນລະບຽບຮຽບຮ້ອຍ, ສະດວກ, ວ່ອງໄວ, ປອດໄພ ແລະ ການປ້ອງກັນຄວາມປອດໄພ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແມ່ນ ມາດຕະການທາງດ້ານການເງິນ ທີ່ນຳໃຊ້ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຕາມອັດຕາປັບໃໝທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕະການອື່ນ ແມ່ນການນຳໃຊ້ມາດຕະການ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ດ້ວຍການ ສຶກສາອົບຮົມ, ທັບມ້າງ, ຍົກຍ້າຍອອກ, ໂຈະການເຄື່ອນໄຫວ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເຈົ້າໜ້າທີ່ລົດໄຟ** ໝາຍເຖິງ ຕຳຫຼວດລົດໄຟ ແລະ ເຈົ້າໜ້າທີ່ກວດກາການແລ່ນລົດໄຟ ທີ່ໄດ້ຮັບການ ແຕ່ງຕັ້ງ ແລະ ມອບໝາຍ ໃຫ້ປະຕິບັດໜ້າທີ່ໃນການ ຄວບຄຸມ, ຮັກສາຄວາມສະຫງົບ, ຄວາມປອດໄພ ແລະ ເປັນລະບຽບຮຽບຮ້ອຍ ໃນຂະບວນ ແລະ ສະຖານີລົດໄຟ ລວມທັງ ແລວທາງລົດໄຟ;

2. **ຫົວຈັກລົດໄຟ** ໝາຍເຖິງ ຫົວຈັກທີ່ໃຊ້ສຳລັບລາກແກ່ລະບົບລໍ້ເລື່ອນ ຊຶ່ງມີການລະບຸຜູ້ຜະລິດ, ຄວາມແຮງ, ຍີ່ຫໍ້ ແລະ ລຸ້ນ ທີ່ຂັບເຄື່ອນດ້ວຍພະລັງງານໄຟຟ້າ Electric Multiple Unit (EMU), ນ້ຳມັນກະຊວນ Diesel Multiple Unit (DMU) ແລະ ອາຍນ້ຳ (Steam);

3. **ສັນຊາດລົດໄຟ** ໝາຍເຖິງ ຖານະຂອງລົດໄຟທີ່ສະແດງວ່າເປັນຂອງປະເທດໃດໜຶ່ງ ດ້ວຍການຂຶ້ນທະບຽນ ແລະ ຕິດເຄື່ອງໝາຍສັນຊາດລົດໄຟ ຕາມກົດໝາຍຂອງ ສປປ ລາວ ຫຼື ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;

4. **ທະບຽນລົດໄຟ** ໝາຍເຖິງ ເລກລະຫັດຂອງລົດໄຟ ທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງ ຕາມກົດໝາຍຂອງ ສປປ ລາວ ຫຼື ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;

5. **ປຶ້ມຄູ່ມືເຕັກນິກການແລ່ນລົດໄຟ** ໝາຍເຖິງ ເອກະສານຂອງໂຮງງານຜູ້ຜະລິດ ທີ່ກຳນົດລາຍລະອຽດ ຄຳແນະນຳ ທາງດ້ານເຕັກນິກການນຳໃຊ້ລົດໄຟ ເພື່ອຊ່ວຍໃຫ້ພະນັກງານຄວບຄຸມຂະບວນລົດໄຟປະຕິບັດ ຢ່າງຖືກຕ້ອງ.

**ມາດຕາ 4 ຫຼັກການກ່ຽວກັບ ການປັບໃໝ ແລະ ມາດຕະການອື່ນ**

ການປັບໃໝ ແລະ ມາດຕະການອື່ນ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;

2. ຄຸ້ມຄອງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັບປະກັນຄວາມ ເປັນລະບຽບຮຽບຮ້ອຍ, ປອດໄພ, ສະດວກ ແລະ ວ່ອງໄວ ໃນການຄວບຄຸມການແລ່ນລົດໄຟໃຫ້ມີ ປະສິດພາບ ແລະ ປະສິດທິຜົນ;

4. ຮັບປະກັນການປະຕິບັດອັດຕາການປັບໃໝໃຫ້ ເປັນເອກະພາບ, ຖືກຕ້ອງ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ ຢູ່ ສປປ ລາວ.

## ໝວດທີ 2
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບ ການຂຶ້ນທະບຽນ, ສັນຊາດ ແລະ ເອກະສານປະຈຳລົດໄຟ

**ມາດຕາ 6 ການລະເມີດລະບຽບການກ່ຽວກັບ ການຂຶ້ນ ທະບຽນ ແລະ ສັນຊາດ ລົດໄຟ**

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບ ການຂຶ້ນ ທະບຽນ ແລະ ສັນຊາດລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. ລົດໄຟທີ່ບໍ່ຂຶ້ນທະບຽນ
   - 10,000,000 ກີບ ສໍາລັບຫາງລາກລົດໄຟ;
   - 10,000,000 ກີບ ສໍາລັບຕູ້ລົດໄຟ;
   - 40,000,000 ກີບ ສໍາລັບຫົວຈັກນໍ້າມັນ;
   - 50,000,000 ກີບ ສໍາລັບຫົວຈັກໄຟຟ້າ;
   - 90,000,000 ກີບ ສໍາລັບລົດໄຟດ່ວນໃຊ້ນໍ້າມັນ (DMU);
   - 100,000,000 ກີບ ສໍາລັບລົດໄຟດ່ວນໃຊ້ໄຟຟ້າ (EMU);

2. 20,000,000 ກີບ ສໍາລັບລົດໄຟທີ່ຕິດ ເຄື່ອງໝາຍສັນຊາດ ແລະ ເຄື່ອງໝາຍທະບຽນ ບໍ່ຖືກຕ້ອງຕາມລະບຽບການ;

3. 30,000,000 ກີບ ສໍາລັບລົດໄຟທີ່ບໍ່ຕິດ ເຄື່ອງໝາຍສັນຊາດ ແລະ ເຄື່ອງໝາຍທະບຽນ;

4. 40,000,000 ກີບ ສໍາລັບການນໍາໃຊ້ລົດໄຟທີ່ຂຶ້ນທະບຽນ ຢູ່ ສປປ ລາວ ແລ້ວໄປຂຶ້ນທະບຽນຢູ່ປະເທດອື່ນ;

5. 50,000,000 ກີບ ສໍາລັບຂະບວນລົດໄຟຂອງປະເທດອື່ນ ທີ່ມີເລກລະຫັດບໍ່ຖືກຕາມໃບແຈ້ງເຂົ້າ ສປປ ລາວ.

**ມາດຕາ 7 ການລະເມີດລະບຽບການກ່ຽວກັບ ເອກະສານປະຈໍາ ລົດໄຟ ແລະ ຖ້ຽວລົດໄຟ**

ລົດໄຟຂົນສົ່ງ ຜູ້ໂດຍສານ ແລະ ສິນຄ້າ ທີ່ບໍ່ມີເອກະສານໃດໜຶ່ງປະຈໍາ ລົດໄຟ ແລະ ຖ້ຽວລົດໄຟ ຈະຖືກປັບໃໝ 10,000,000 ກີບ ຕາມແຕ່ລະລາຍການ ດັ່ງນີ້:

1. ໃບຢັ້ງຢືນການຂຶ້ນທະບຽນ;
2. ໃບຢັ້ງຢືນການກວດກາເຕັກນິກ;
3. ປຶ້ມບັນທຶກການແລ່ນລົດໄຟ;
4. ປຶ້ມຄູ່ມືເຕັກນິກການແລ່ນລົດໄຟ;
5. ໃບປະກັນໄພ;
6. ສໍາເນົາໃບອະນຸຍາດດໍາເນີນທຸລະກິດ;
7. ໃບກໍາກັບສິນຄ້າ ສໍາລັບລົດໄຟຂົນສົ່ງສິນຄ້າ;
8. ໃບນໍາສົ່ງສິນຄ້າ ສໍາລັບລົດໄຟຂົນສົ່ງສິນຄ້າ.

## ໝວດທີ 3
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ ຂອງພະນັກງານປະຕິບັດການແລ່ນລົດໄຟ

**ມາດຕາ 8 ການລະເມີດລະບຽບການກ່ຽວກັບ ການອອກໃບຂັບຂີ່ ຫົວຈັກລົດໄຟ ແລະ ລົດໄຟ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດລະບຽບການກ່ຽວກັບ ການອອກໃບຂັບຂີ່ ຫົວຈັກລົດໄຟ ແລະ ລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 15,000,000 ກີບ ສໍາລັບການອອກໃບຂັບຂີ່ ຫົວຈັກລົດໄຟ ແລະ ລົດໄຟ ບໍ່ຖືກຕ້ອງຕາມປະເພດ ຫຼື ຊະນິດ ຂອງລົດໄຟ;

2. 35,000,000 ກີບ ສໍາລັບການອອກໃບຂັບຂີ່ ຫົວຈັກລົດໄຟ ແລະ ລົດໄຟ ໃຫ້ແກ່ຜູ້ທີ່ ບໍ່ໄດ້ຜ່ານການສອບເສັງ ຫຼື ສອບເສັງບໍ່ຜ່ານ.

**ມາດຕາ 9 ການລະເມີດລະບຽບການກ່ຽວກັບ ການປະຕິບັດໜ້າທີ່ຂອງຫົວໜ້າສູນບັນຊາການແລ່ນລົດໄຟ**

ຫົວໜ້າສູນບັນຊາການແລ່ນລົດໄຟ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດການແລ່ນລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 5,000,000 ກີບ ສໍາລັບການບໍ່ມີໃບຮັບຮອງ ເປັນພະນັກງານຂັບລົດໄຟຈາກກົມທາງລົດໄຟ;

2. 6,000,000 ກີບ ສໍາລັບການບໍ່ຮັບການລາຍງານ ຂອງພະນັກງານຄວບຄຸມການແລ່ນລົດໄຟ ໃນແຕ່ລະເຂດສະຖານີ;

3. 7,000,000 ກີບ ສໍາລັບການບໍ່ແຈ້ງຫາ ສູນຄວບຄຸມຍ່ອຍ, ສະຖານີ, ຂະບວນລົດໄຟ ໃນການບັນຊາການແລ່ນລົດໄຟ;

4. 8,000,000 ກີບ ສໍາລັບການບໍ່ ຄວບຄຸມ, ຕິດຕາມ ແລະ ສັ່ງການ ການແລ່ນລົດໄຟ ຕາມກໍານົດເວລາ;

5. 12,000,000 ກີບ ສໍາລັບການບໍ່ ຈັດການ, ສັ່ງການຫຼີກຂະບວນລົດໄຟ ຫຼື ສັ່ງການປ່ຽນທາງແລ່ນຂອງຂະບວນລົດໄຟ ຫຼື ສັ່ງຢຸດຂະບວນລົດໄຟ.

**ມາດຕາ 10 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຂອງ ຫົວໜ້າສະຖານີ**

ຫົວໜ້າສະຖານີ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດການແລ່ນລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 4,000,000 ກີບ ສໍາລັບການເກັບລາຍຮັບ ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

2. 5,000,000 ກີບ ສໍາລັບການບໍ່ມີໃບຮັບຮອງເປັນຫົວໜ້າສະຖານີຈາກກົມທາງລົດໄຟ;

3. 5,000,000 ກີບ ສໍາລັບການບໍ່ອະນຸຍາດໃຫ້ຂະບວນລົດໄຟແລ່ນເຂົ້າ-ອອກ ຕາມລະບຽບການແລ່ນລົດໄຟພາຍ ໃນເຂດສະຖານີຂອງຕົນ;

4. 15,000,000 ກີບ ສໍາລັບການມີຄວາມປະໝາດ, ເລີນເລີ້ ຊຶ່ງເປັນເຫດໃຫ້ເກີດຄວາມເສຍຫາຍ ຫຼື ອຸບປະຕິເຫດ ທີ່ບໍ່ຮ້າຍແຮງ;

5. 12,000,000 ກີບ ສໍາລັບການໂຈະການໃຫ້ບໍລິການສະຖານີລົດໄຟໂດຍບໍ່ມີການລາຍງານໃຫ້ກົມທາງລົດໄຟ;

6. 12,000,000 ກີບ ສໍາລັບການບໍ່ ປະຕິບັດໜ້າທີ່ ແລະ ຄວບຄຸມວຽກງານໃນຄວາມຮັບຜິດຊອບຂອງຕົນໃຫ້ສອດຄ່ອງ ກັບກົດໝາຍ ແລະ ລະບຽບການ.

**ມາດຕາ 11 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຂອງ ພະນັກງານຂັບລົດໄຟ**

ພະນັກງານຂັບລົດໄຟ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດການແລ່ນລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 1,800,000 ກີບ ສໍາລັບການບໍ່ຖືໃບຂັບຂີ່ ຫົວຈັກລົດໄຟ ແລະ ລົດໄຟ ຫຼື ນໍາໃຊ້ໃບຂັບຂີ່ຫົວຈັກລົດໄຟ ແລະ ລົດໄຟໝົດອາຍຸ;

2. 5,000,000 ກີບ ຕາມແຕ່ລະກໍລະນີ ດັ່ງນີ້:

- ບໍ່ກວດກາ ເອກະສານເປັນຕົ້ນ ໃບຢັ້ງຢືນລະບົບເຕັກນິກ ແລະ ໄຟສັນຍານຂອງລົດໄຟ, ໃບອະນຸຍາດໃຫ້ຢຸດ ຫຼື ຫຼີກຂະບວນລົດໄຟ ຕາມແຜນການແລ່ນລົດໄຟ;

- ມີທາດເຫຼົ້າໃນຮ່າງກາຍ ໃນເວລາຂັບຂີ່ຫົວຈັກລົດໄຟ;

- ມີຄວາມປະໝາດອາດຈະພາໃຫ້ເກີດມີຄວາມສ່ຽງຕໍ່ເຫດສຸກເສີນ ຫຼື ອຸບປະຕິເຫດ ໃນເວລາຂັບຂີ່ລົດໄຟ;

- ບໍ່ປະຕິບັດຕາມຄຳສັ່ງປ່ອຍຂະບວນລົດໄຟຂອງຫົວໜ້າສະຖານີ ແລະ ພະນັກງານຄວບຄຸມຂະບວນລົດໄຟ ກ່ອນອອກຈາກສະຖານີລົດໄຟ;

- ບໍ່ປະຕິບັດຕາມຄວາມໄວທີ່ກຳນົດໄວ້ໃນ ຕາຕະລາງການແລ່ນລົດໄຟ ໃນແຕ່ລະຊ່ວງທາງ;

- ແລ່ນລົດໄຟ ເມື່ອເຫັນວ່າບໍ່ຮັບປະກັນຄວາມປອດໄພ ແລະ ບໍ່ລາຍງານດ່ວນໃຫ້ພະນັກງານຄວບຄຸມຂະບວນລົດໄຟ;

- ບໍ່ປະຕິບັດຕາມສັນຍານຈະລາຈອນການແລ່ນລົດໄຟ;

3. 5,000,000 ກີບ ສຳລັບການບໍ່ມີໃບຮັບຮອງເປັນພະນັກງານຂັບລົດໄຟຈາກກົມທາງລົດໄຟ;

4. 6,000,000 ກີບ ສຳລັບການອະນຸຍາດໃຫ້ຜູ້ອື່ນຂັບຂີ່ລົດໄຟ.

**ມາດຕາ 12 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຂອງ ພະນັກງານປະຕິບັດການຢູ່ສະຖານີລົດໄຟ**

ພະນັກງານປະຕິບັດການຢູ່ສະຖານີລົດໄຟ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ ຈະຖືກປັບໃໝ ດັ່ງນີ້:

1. 3,500,000 ກີບ ສຳລັບການບໍ່ຈັດຂະບວນລົດໄຟ ແລະ ບໍ່ປະຕິບັດໜ້າທີ່ ກ່ຽວກັບການຮັບຕ້ອນຜູ້ໂດຍສານ, ການຄ່ຽນຖ່າຍສິນຄ້າ ຢູ່ສະຖານີລົດໄຟ ຕາມຕາຕະລາງ ແລະ ແຜນການແລ່ນລົດໄຟ;

2. 4,000,000 ກີບ ສຳລັບການອະນຸຍາດການແລ່ນລົດໄຟ ບໍ່ຖືກຕ້ອງຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນລະບຽບການແລ່ນລົດໄຟ;

3. 4,000,000 ກີບ ສຳລັບການອະນຸຍາດໃຫ້ຂະບວນລົດໄຟແລ່ນອອກຈາກສະຖານີ ເມື່ອເຫັນວ່າມີຄວາມສ່ຽງຕໍ່ຄວາມປອດໄພ ແລະ ບໍ່ແຈ້ງໃຫ້ພະນັກງານຄວບຄຸມການແລ່ນລົດໄຟ ຢ່າງທັນການ;

4. 5,000,000 ກີບ ສຳລັບການບໍ່ກວດກາ ພາຫະນະ ແລະ ວັດຖຸປະກອນ ໃຫ້ສອດຄ່ອງກັບກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ລົດໄຟ ແລະ ມາດຕະຖານຂອງພະນັກງານ.

**ມາດຕາ 13 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຂອງ ພະນັກງານເກາະຫົວຈັກ ແລະ ຕູ້ລົດໄຟ**

ພະນັກງານເກາະຫົວຈັກ ແລະ ຕູ້ລົດໄຟ ທີ່ລະເມີດລະບຽບການກ່ຽວກັບການເກາະຫົວຈັກ ແລະ ຕູ້ລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 4,000,000 ກີບ ສຳລັບການບໍ່ປະຕິບັດຕາມຄຳສັ່ງຂອງພະນັກງານຄວບຄຸມການແລ່ນລົດໄຟ;

2. 5,000,000 ກີບ ສຳລັບການປະຕິບັດໜ້າທີ່ເກາະຫົວຈັກ ແລະ ຕູ້ລົດໄຟ ບໍ່ຖືກຕ້ອງ ຕາມຂັ້ນຕອນແລະ ມາດຕະຖານເຕັກນິກລົດໄຟ.

**ມາດຕາ 14 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຂອງ ພະນັກງານຄວບຄຸມການສັບປ່ຽນລາງລົດໄຟ**

ພະນັກງານຄວບຄຸມການສັບປ່ຽນລາງລົດໄຟ ທີ່ລະເມີດລະບຽບການກ່ຽວກັບການຄວບຄຸມການສັບປ່ຽນລາງລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 5,000,000 ກີບ ສຳລັບການສັບປ່ຽນລາງລົດໄຟບໍ່ສຳເລັດ ກ່ອນການປ່ອຍລົດໄຟ ເຂົ້າ-ອອກ ຕາມແລວທາງທີ່ກຳນົດໄວ້;

2. 6,000,000 ກີບ ສຳລັບການບໍ່ສັບປ່ຽນລາງລົດໄຟຕາມຄຳສັ່ງຂອງຫົວໜ້າສະຖານີ ກ່ຽວກັບການສັບປ່ຽນລາງລົດໄຟ ຕາມແຜນຕາຕະລາງແລ່ນລົດໄຟທີ່ກຳນົດໄວ້.

**ມາດຕາ 15 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຂອງ ພະນັກງານຄວບຄຸມການແລ່ນລົດໄຟ**

ພະນັກງານຄວບຄຸມການແລ່ນລົດໄຟ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ ຈະຖືກປັບໃໝ ດັ່ງນີ້:

1. 5,000,000 ກີບ ສຳລັບການບໍ່ມີໃບຮັບຮອງເປັນພະນັກງານຄວບຄຸມການແລ່ນລົດໄຟຈາກກົມທາງລົດໄຟ;

2. 5,000,000 ກີບ ສຳລັບການບໍ່ອອກຄຳສັ່ງການແລ່ນລົດໄຟ ຕາມແຜນຕາຕະລາງແລ່ນລົດໄຟ ແລະ ຂອບເຂດພື້ນທີ່ທີ່ໄດ້ຮັບການມອບໝາຍ;

3. 5,500,000 ກີບ ສຳລັບການບໍ່ອອກຄຳສັ່ງຈັດລົດໄຟໄປຊ່ວຍກູ້ໄພ ແລະ ເຄື່ອງກົ້ນສະຖານທີ່ ເມື່ອເກີດອຸບປະຕິເຫດ ຫຼື ເຫດການສຸກເສີນ;

4. 6,000,000 ກີບ ສຳລັບການບໍ່ແຈ້ງເຕືອນໃຫ້ພະນັກງານຂັບລົດໄຟ ເພື່ອຫຼຸດຜ່ອນຄວາມໄວ ຫຼື ຢຸດການແລ່ນລົດໄຟຊົ່ວຄາວ ເມື່ອເຫັນວ່າມີຄວາມສ່ຽງຕໍ່ຄວາມປອດໄພ.

**ມາດຕາ 16 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຂອງ ພະນັກງານຄວບຄຸມຂະບວນລົດໄຟ**

ພະນັກງານຄວບຄຸມຂະບວນລົດໄຟ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດການແລ່ນລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 3,000,000 ກີບ ສຳລັບການອະນຸຍາດໃຫ້ພະນັກງານທີ່ຂາດຄຸນສົມບັດ, ສຸຂະພາບບໍ່ແຂງແຮງ ປະຕິບັດໜ້າທີ່ໃນຂະບວນລົດໄຟ;

2. 4,000,000 ກີບ ສຳລັບການບໍ່ ປະຖົມພະຍາບານໃນກໍລະນີມີຄົນບາດເຈັບ ຫຼື ນຳສົ່ງຄົນເຈັບ ພ້ອມທັງເອກະສານ ແລະ ເຄື່ອງຂອງ ໃຫ້ ຫົວໜ້າສະຖານີ, ເຈົ້າໜ້າທີ່ຕຳຫຼວດ, ໂຮງໝໍ ຫຼື ອົງການປົກຄອງທ້ອງຖິ່ນ ທີ່ຢູ່ໃກ້ທີ່ສຸດ;

3. 4,500,000 ກີບ ສຳລັບການບໍ່ອອກຄຳສັ່ງໃຫ້ຜູ້ໂດຍສານປະຕິບັດຕາມມາດຕະການຮັກສາຄວາມປອດໄພ ຢ່າງເຂັ້ມງວດ ໃນກໍລະນີເກີດ ເຫດສຸດວິໄສ ຫຼື ເຫດການສຸກເສີນ ແລະ ບໍ່ລາຍງານໃຫ້ຫົວໜ້າສະຖານີ ທີ່ຢູ່ໃກ້ທີ່ສຸດ ຢ່າງຮີບດ່ວນ;

4. 5,000,000 ກີບ ສຳລັບການບໍ່ສັ່ງໂຈະການປະຕິບັດໜ້າທີ່ຂອງພະນັກງານທີ່ກະທຳຜິດໃນຂະບວນລົດໄຟ ແລະ ບໍ່ແຈ້ງໃຫ້ເຈົ້າໜ້າທີ່ ທີ່ມີສິດອຳນາດເພື່ອແກ້ໄຂບັນຫາ ຢ່າງຮີບດ່ວນ;

5. 5,000,000 ກີບ ສຳລັບການບໍ່ມີໃບຮັບຮອງເປັນພະນັກງານຄວບຄຸມຂະບວນລົດໄຟຈາກກົມທາງລົດໄຟ;

6. 6,000,000 ກີບ ສຳລັບການບໍ່ສັ່ງຈັບບຸກຄົນທີ່ກະທຳຜິດເຊິ່ງໜ້າຢ່າງຮ້າຍແຮງຕໍ່ກົດໝາຍ ແລະ ລະບຽບການ;

7. 6,000,000 ກີບ ສຳລັບການບໍ່ສົ່ງມອບບຸກຄົນທີ່ລະເມີດ ແລະ ກະທຳຜິດໃຫ້ຫົວໜ້າສະຖານີ, ເຈົ້າໜ້າທີ່ຕຳຫຼວດ ຫຼື ອົງການປົກຄອງທ້ອງຖິ່ນ ທີ່ຢູ່ໃກ້ທີ່ສຸດ;

8. 7,000,000 ກີບ ສຳລັບການບໍ່ເຮັດບົດບັນທຶກກ່ຽວກັບ ເຫດການທີ່ບໍ່ສະຫງົບ ຫຼື ອຸບປະຕິເຫດ ທີ່ເກີດຂຶ້ນໃນຂະບວນລົດໄຟ;

9. 7,000,000 ກີບ ສຳລັບການບໍ່ປະຕິບັດຕາມຄຳສັ່ງ ຂອງຫົວໜ້າສະຖານີໃນເວລາແລ່ນລົດໄຟ ເຂົ້າ-ອອກ ສະຖານີ;

10. 7,000,000 ກີບ ສຳລັບການບໍ່ຄວບຄຸມເຫດການທັງໝົດໃຫ້ມີຄວາມປອດໄພ ຕາມຄຳສັ່ງ ຂອງສູນບັນຊາການແລ່ນລົດໄຟ ພ້ອມທັງບໍ່ອຳນວຍຄວາມສະດວກໃຫ້ແກ່ຜູ້ໂດຍສານໃນຂະບວນລົດໄຟ;

11. 8,000,000 ກີບ ສຳລັບການບໍ່ຮັບປະກັນການແລ່ນລົດໄຟໃຫ້ຖືກຕ້ອງຕາມລະບຽບການ ແລ່ນລົດໄຟ, ຂັ້ນຕອນ, ຕາຕະລາງແຜນການແລ່ນລົດໄຟ ແລະ ຄວາມໄວທີ່ກຳນົດໄວ້;

12. 8,000,000 ກີບ ສຳລັບການອະນຸຍາດໃຫ້ລົດໄຟແລ່ນ ເມື່ອເຫັນວ່າບໍ່ມີຄວາມປອດໄພ.

**ມາດຕາ 17 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຂອງ ພະນັກງານກວດກາ ອຸໂມງ, ລາງ ແລະ ຂົວ ລົດໄຟ**

ພະນັກງານກວດກາ ອຸໂມງ, ລາງ ແລະ ຂົວ ລົດໄຟ ທີ່ລະເມີດລະບຽບການກ່ຽວກັບການປະຕິບັດ ການແລ່ນລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 1,500,000 ກີບ ສຳລັບການບໍ່ຕິດຕາມ ກວດກາ ຢ່າງເປັນປະຈຳກ່ຽວກັບ ຄວາມເສຍຫາຍ ແລະ ສິ່ງກີດຂວາງ ໃຫ້ທັນເວລາ ເພື່ອຮັບປະກັນຄວາມປອດໄພ ໃນການແລ່ນລົດໄຟ ພາຍໃນຂອບເຂດ ທີ່ຕົນ ຮັບຜິດຊອບ ພ້ອມທັງບັນທຶກໃສ່ປຶ້ມກວດກາ ຢ່າງຄົບຖ້ວນ ແລ້ວລາຍງານໃຫ້ຫົວໜ້າສະຖານີ;

2. 2,500,000 ກີບ ສຳລັບການບໍ່ແກ້ໄຂຄວາມເສຍຫາຍ ແລະ ສິ່ງກີດຂວາງຂະໜາດນ້ອຍໃຫ້ ທັນເວລາ ພ້ອມທັງສະໜອງຂໍ້ມູນ ຢ່າງວ່ອງໄວ ຫຼື ຕິດຕັ້ງເຄື່ອງໝາຍໃຫ້ຢຸດການແລ່ນລົດໄຟ ເມື່ອພົບເຫັນ ສິ່ງກີດຂວາງທີ່ຈະສົ່ງຜົນກະທົບຕໍ່ຄວາມປອດໄພ ໃນການຂົນສົ່ງທາງລົດໄຟ.

**ມາດຕາ 18 ການລະເມີດລະບຽບການກ່ຽວກັບການປະຕິບັດໜ້າທີ່ຂອງ ພະນັກງານເຝົ້າຍາມ ອຸໂມງ, ຂົວ ແລະ ທາງຄົບ**

ພະນັກງານເຝົ້າຍາມ ອຸໂມງ, ຂົວ ແລະ ທາງຄົບ ທີ່ລະເມີດລະບຽບການ ກ່ຽວກັບການປະຕິບັດການ ແລ່ນລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 2,000,000 ກີບ ສຳລັບການບໍ່ ປິດ ແລະ ເປີດ ສິ່ງກັ້ນທາງແຍກ ໃຫ້ຖືກເວລາ, ທີ່ບໍ່ຮັບປະກັນ ຄວາມປອດໄພໃຫ້ ຄົນ ແລະ ຍານພາຫະນະ ໃນເວລາລົດໄຟແລ່ນຕັດຜ່ານທາງຫຼວງ ຫຼື ຕັດຜ່ານທາງລົດໄຟ;

2. 3,000,000 ກີບ ສຳລັບການບໍ່ ກວດກາ, ບູລະນະຮັກສາ ແລະ ນຳໃຊ້ ອຸປະກອນກັ້ນທາງແຍກ ໃຫ້ສອດຄ່ອງກັບມາດຕະຖານເຕັກນິກລົດໄຟ.

## ໝວດທີ 4
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບເຂດສະຫງວນທາງລົດໄຟ

### ມາດຕາ 19 ການລະເມີດລະບຽບການກ່ຽວກັບພື້ນທີ່ສະຫງວນທາງລົດໄຟຢູ່ໜ້າດິນ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບພື້ນທີ່ສະຫງວນທາງລົດໄຟຢູ່ໜ້າດິນ ຈະຖືກປັບໃໝ ດັ່ງນີ້:

1. 400,000 ກີບ ສໍາລັບການ ຖິ້ມ ຫຼື ຈູດ ຂີ້ເຫຍື້ອ, ຖິ້ມ ເສດວັດສະດຸກໍ່ສ້າງ, ສິ່ງເສດເຫຼືອອື່ນ, ຖອກເທ ແລະ ປ່ອຍນໍ້າເປື້ອນ ຢູ່ພື້ນທີ່ສະຫງວນທາງລົດໄຟຢູ່ໜ້າດິນ. ຖ້າບໍ່ຍົກຍ້າຍ ຫຼື ອະນາໄມ ສິ່ງເສດເຫຼືອດັ່ງກ່າວອອກຕາມເວລາທີ່ກໍານົດ ຈະຖືກປັບໃໝເພີ່ມ 100,000 ກີບ ຕໍ່ວັນ;

2. 500,000 ກີບ ຕໍ່ໂຕ ສໍາລັບການ ລ້ຽງ, ປ່ອຍ ແລະ ເຄື່ອນຍ້າຍ ສັດລ້ຽງ (ສັດສີ່ຂາ) ເປັນຕົ້ນ ໝູ, ແບ້, ງົວ, ຄວາຍ, ມ້າ, ຊ້າງ ຕາມທາງລົດໄຟ;

3. 600,000 ກີບ ສໍາລັບການ ປ່ອຍຄວັນ, ມົນລະພິດ ທີ່ສົ່ງຜົນກະທົບຕໍ່ຄວາມປອດໄພ ຫຼື ປິດບັງການແນມເຫັນໃນເວລາແລ່ນລົດໄຟ;

4. 2,000,000 ກີບ ສໍາລັບການ ປຸກຕູບ, ຕໍ່ເພີງ ຫຼື ອື່ນໆ;

5. 2,000,000 ກີບ ສໍາລັບການ ປີນ, ລອດ ຫຼື ເຄື່ອນຍ້າຍ ເຄື່ອງກັ້ນທາງລົດໄຟ ເພື່ອຂ້າມທາງລົດໄຟ;

6. 6,000,000 ກີບ ຕາມແຕ່ລະກໍລະນີ ດັ່ງນີ້:

- ວາງວັດສະດຸກໍ່ສ້າງ ໃນຮ່ອງລະບາຍນໍ້າ ຫຼື ພື້ນທີ່ສະຫງວນທາງລົດໄຟຢູ່ໜ້າດິນ ເຊັ່ນ ໄມ້, ຫີນ, ຊາຍ, ດິນ, ເຫຼັກ ແລະ ວັດສະດຸກໍ່ສ້າງອື່ນ;
- ຕິດຕັ້ງ ອຸປະກອນໄຟສັນຍານ, ປ້າຍຈະລາຈອນ ແລະ ປ້າຍຊີ້ບອກ ທາງລົດໄຟ ທີ່ບໍ່ຖືກຕ້ອງຕາມມາດຕະຖານເຕັກນິກລົດໄຟ;
- ໃຊ້ ໄຟສັນຍານ ຫຼື ອຸປະກອນໃນການຢຸດລົດໄຟ ກ່ຽວກັບຄວາມປອດໄພທາງລົດໄຟ ໂດຍບໍ່ມີເຫດຈໍາເປັນ;
- ຖົມ, ຕັນ, ກອງ ວັດສະດຸໃດໜຶ່ງ ຊຶ່ງເປັນການກີດຂວາງການລະບາຍນໍ້າ ແລະ ທາງໄຫຼຂອງນໍ້າ;
- ມ້າງຮື້, ບຸກລຸກ, ມ້າງເພ, ທໍາລາຍໂຄງປະກອບ ແລະ ສິ່ງປະກອບຂອງທາງລົດໄຟ;

7. 12,000,000 ກີບ ຕາມແຕ່ລະກໍລະນີ ດັ່ງນີ້:

- ທໍາລາຍລະບົບຕ້ານເຈື່ອນ ຫຼື ການຕັດຕົ້ນໄມ້ທີ່ປູກໄວ້ ເພື່ອຮັກສາໂຄງສ້າງທາງລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;
- ດໍາເນີນການກໍ່ສ້າງ, ປຸກສ້າງ ຫຼື ຕໍ່ເຕີມ ກິດຈະການໃດໜຶ່ງ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;
- ປຸກສ້າງ ຫຼື ກໍ່ສ້າງຢູ່ກ້ອງຂົວ ຫຼື ວາງທໍ່ສົ່ງ ຜ່ານທໍ່ລະບາຍນໍ້າ ທາງລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;
- ກໍ່ສ້າງ, ສ້ອມແປງ ແລະ ຕິດຕັ້ງ ລະບົບໄຟຟ້າ, ນໍ້າປະປາ, ໂທລະຄົມ ມະນາຄົມ ແລະ ອື່ນໆ ໂດຍບໍ່ໄດ້ຮັບການອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;

- ສ້າງທາງລັກຜ່ານ, ກໍ່ສ້າງຂົວ, ອຸໂມງ, ຮ່ອງລະບາຍນໍ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;

8. 20,000,000 ກີບ ສໍາລັບການ ຈັດຕະຫຼາດນັດ ແລະ ກິດຈະການອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;

9. 30,000,000 ກີບ ສໍາລັບການ ຈູດ ປ່າ, ໄຮ່, ສວນ ທີ່ສົ່ງຜົນກະທົບຕໍ່ ໂຄງສ້າງທາງລົດໄຟ ແລະ ການແລ່ນລົດໄຟ;

10. 100,000,000 ກີບ ສໍາລັບການ ກົ່ນຕົ້ນໄມ້, ຂຸດ, ເຈາະ, ຖົມດິນ, ຂຸດຄົ້ນ ແຮ່ທາດ, ບໍ່ວັດສະດຸກໍ່ສ້າງ ຫຼື ກິດຈະກໍາການລະເບີດ ຊຶ່ງສົ່ງຜົນກະທົບ ແລະ ສ້າງຄວາມເສຍຫາຍ ຕໍ່ໂຄງສ້າງທາງລົດໄຟ, ຂົວ, ອຸໂມງ;

11. 60,000,000 ກີບ ສໍາລັບການ ປຸກສ້າງ ເຮືອນ, ອາຄານ;

12. 70,00,000 ກີບ ສໍາລັບການ ຕິດຕັ້ງ ອຸປະກອນ ແລະ ສິ່ງອໍານວຍຄວາມສະດວກ ໃສ່ເສົາໄຟຟ້າທາງລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 20 ການລະເມີດລະບຽບການກ່ຽວກັບພື້ນທີ່ສະຫງວນທາງລົດໄຟເທິງໜ້າດິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບພື້ນທີ່ສະຫງວນທາງລົດໄຟເທິງໜ້າດິນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ ຈະຖືກປັບໃໝ ດັ່ງນີ້:

1. 20,000,000 ກີບ ສໍາລັບການເບິ່ງສາຍສັນຍານໂທລະຄົມມະນາຄົມ ແລະ ການສື່ສານ ຜ່ານເຂດສະຫງວນທາງລົດໄຟ;

2. 30,000,000 ກີບ ສໍາລັບການກໍ່ສ້າງຂົວຂ້າມທາງລົດໄຟ;

3. 80,000,000 ກີບ ສໍາລັບການຕິດຕັ້ງສາຍໄຟຟ້າແຮງສູງ ຜ່ານພື້ນທີ່ສະຫງວນທາງລົດໄຟ.

**ມາດຕາ 21 ການລະເມີດລະບຽບການກ່ຽວກັບພື້ນທີ່ສະຫງວນທາງລົດໄຟຢູ່ໃຕ້ດິນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບພື້ນທີ່ສະຫງວນທາງລົດໄຟຢູ່ໃຕ້ດິນ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ ຈະຖືກປັບໃໝ ດັ່ງນີ້:

1. 30,000,000 ກີບ ສໍາລັບການວາງ ທໍ່ນໍ້າປະປາ, ສາຍໂທລະສັບ ແລະ ສາຍໄຟຟ້າ;

2. 70,000,000 ກີບ ສໍາລັບການວາງທໍ່ສົ່ງ ອາຍແກັສ ຫຼື ນໍ້າມັນເຊື້ອໄຟ;

3. 80,000,000 ກີບ ສໍາລັບການກໍ່ສ້າງທາງລອດໃຕ້ດິນ.

**ມາດຕາ 22 ການລະເມີດລະບຽບການກ່ຽວກັບພື້ນທີ່ສະຫງວນທາງລົດໄຟເທິງໜ້ານໍ້າ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບພື້ນທີ່ສະຫງວນທາງລົດໄຟຢູ່ເທິງໜ້ານໍ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ ຈະຖືກປັບໃໝ ດັ່ງນີ້:

1. 50,000,000 ກີບ ສໍາລັບການ ຖົມດິນ, ຕັນແມ່ນໍ້າ, ຕິດຕັ້ງຂົວລອຍ ຫຼື ສິ່ງອໍານວຍຄວາມສະດວກອື່ນ ທີ່ເປັນອັນຕະລາຍ ແລະ ຄວາມປອດໄພຂອງຂົວທາງລົດໄຟ;

2. 100,000,000 ກີບ ສໍາລັບການດໍາເນີນກິດຈະການຂຸດຄົ້ນ ແຮ່ທາດ ຫຼື ບໍ່ວັດສະດຸກໍ່ສ້າງຕ່າງໆ.

ມາດຕາ 23 ການລະເມີດລະບຽບການກ່ຽວກັບພື້ນທີ່ສະຫງວນຂອງອຸໂມງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວພື້ນທີ່ສະຫງວນຂອງອຸໂມງທາງລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ ຈະຖືກປັບໃໝ ດັ່ງນີ້:

1. 50,000,000 ກີບ ສໍາລັບການກໍ່ສ້າງທາງຢູ່ ເທິງອຸໂມງ ແລະ ປາກອຸໂມງ;

2. 100,000,000 ກີບ ສໍາລັບການຂຸດຄົ້ນ ແຮ່ທາດ ຫຼື ບໍ່ວັດສະດຸກໍ່ສ້າງຢູ່ ເທິງອຸໂມງ ແລະ ປາກອຸໂມງ;

3. 150,000,000 ກີບ ສໍາລັບການລະເບີດຫີນຢູ່ ເທິງອຸໂມງ ແລະ ປາກອຸໂມງ.

## ໝວດທີ 5
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການ ຄຸ້ມຄອງ, ປະຕິບັດງານ ແລະ ໃຫ້ບໍລິການ ໃນເຂດສະຖານີລົດໄຟ

ມາດຕາ 24 ການລະເມີດລະບຽບການກ່ຽວກັບການ ຄຸ້ມຄອງ ແລະ ປະຕິບັດງານ ໃນເຂດສະຖານີລົດໄຟ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການ ຄຸ້ມຄອງ ແລະ ປະຕິບັດງານໃນເຂດສະຖານີລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 400,000 ກີບ ຕໍ່ໂຕ ສໍາລັບການ ລ້ຽງ, ປ່ອຍ ແລະ ເຄື່ອນຍ້າຍ ສັດລ້ຽງ ເຊັ່ນ ໝູ, ແບ້, ງົວ, ຄວາຍ, ມ້າໃນເຂດສະຖານີລົດໄຟ;

2. 500,000 ກີບ ສໍາລັບການ ບໍ່ໃສ່ເສື້ອສະທ້ອນແສງ ຫຼື ເສື້ອທີ່ມີແຖບສະທ້ອນແສງ ໃນເວລາປະຕິບັດງານກາງຄືນຢູ່ເຂດປະຕິບັດການແລ່ນລົດໄຟ;

3. 2,000,000 ກີບ ສໍາລັບການ ນໍາໃຊ້ ດອກໄຟ, ແສງເລເຊີ, ເລົາແສງ ຫຼື ແສງສະທ້ອນ ທີ່ສົ່ງຜົນກະທົບຕໍ່ການແລ່ນລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຫົວໜ້າສະຖານີລົດໄຟ;

4. 2,500,000 ກີບ ສໍາລັບການ ເຄື່ອນຍ້າຍ, ປອມແປງ ຫຼື ທໍາລາຍ ເຄື່ອງໝາຍ, ເຄື່ອງໝາຍບອກຈຸດທີ່ຕັ້ງ, ຫຼັກໝາຍເຂດກໍ່ສ້າງ;

5. 3,000,000 ກີບ ສໍາລັບການ ບໍ່ປະເມີນຜົນກະທົບຕໍ່ຄວາມປອດໄພ ເມື່ອມີການປ່ຽນແປງທາງດ້ານເຕັກນິກ ແລະ ແຜນການບໍລິການ;

6. 3,500,000 ກີບ ສໍາລັບການ ບໍ່ຈັດຕັ້ງປະຕິບັດແຜນງານປ້ອງກັນ ຄົນ, ສັດປ່າ ແລະ ສັດລ້ຽງ;

7. 4,000,000 ກີບ ສໍາລັບການ ບໍ່ປະຕິບັດຕາມລະບຽບການກ່ຽວກັບການໃຫ້ການບໍລິການຢູ່ສະຖານີ ແລະ ຂະບວນ ລົດໄຟ ຢ່າງຄົບຖ້ວນ;

8. 4,500,000 ກີບ ສໍາລັບການບໍ່ ປັບປຸງ ແລະ ຍົກລະດັບ ສິ່ງອໍານວຍຄວາມສະດວກ ຫຼື ອຸປະກອນ ພາຍໃນອາຄານຜູ້ໂດຍສານ ເພື່ອອໍານວຍຄວາມສະດວກໃຫ້ ພຣະສົງ, ຜູ້ອາຍຸສູງ ແລະ ຄົນພິການ;

9. 5,000,000 ກີບ ສໍາລັບການບໍ່ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ຮົ້ວ ຫຼື ກໍາແພງ ໃນເຂດສະຖານີລົດໄຟ;

10. 9,000,000 ກີບ ສໍາລັບການບໍ່ ຕິດຕາມ ກວດກາ, ບູລະນະຮັກສາ ແລະ ສ້ອມແປງ ໂຄງລ່າງພື້ນຖານທາງລົດໄຟ, ສະຖານີ ແລະ ແລວທາງລົດໄຟ;

11. 10,000,000 ກີບ ສຳລັບການ ກໍ່ສ້າງ, ຕິດຕັ້ງ ແລະ ສ້ອມແປງ ວັດຖຸປະກອບ, ສິ່ງອຳນວຍຄວາມສະດວກ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;

12. 12,000,000 ກີບ ສຳລັບການນຳໃຊ້ທີ່ດິນໃນເຂດສະຖານີລົດໄຟ ໂດຍບໍ່ຖືກຕ້ອງຕາມຈຸດປະສົງ ຫຼື ເປົ້າໝາຍ;

13. 15,000,000 ກີບ ສຳລັບການ ຕິດຕັ້ງ ໄຟສັນຍານ, ປ້າຍເຕືອນ, ປ້າຍຫ້າມ ໂດຍບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ;

14. 20,000,000 ກີບ ສຳລັບການ ເຄື່ອນຍ້າຍ, ປ່ຽນແປງ ຮູບຮ່າງ ຫຼື ສ້າງຄວາມເສຍຫາຍແກ່ວັດຖຸປະກອບ, ປ້າຍ, ເຄື່ອງໝາຍ, ເຄື່ອງແບ່ງເຂດ, ເຄື່ອງສົ່ງສັນຍານ, ເຄື່ອງປ້ອງກັນຄວາມປອດໄພ ແລະ ສິ່ງອຳນວຍຄວາມສະດວກ;

15. 25,000,000 ກີບ ສຳລັບການ ຂຸດ ຫຼື ຂຸດເຈາະ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 25 ການລະເມີດລະບຽບການກ່ຽວກັບການໃຫ້ບໍລິການຢູ່ສະຖານີລົດໄຟ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດລະບຽບການກ່ຽວກັບການໃຫ້ການບໍລິການຢູ່ສະຖານີລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 1,000,000 ກີບ ສຳລັບການ ຂາຍເຄື່ອງຢູ່ພື້ນທີ່ສາທາລະນະ ຂອງສະຖານີລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດ;

2. 1,500,000 ກີບ ສຳລັບການບໍ່ ຈັດສັນ ແລະ ຄວບຄຸມການຈອດ ລົດທົ່ວໄປ, ລົດຂົນສົ່ງຜູ້ໂດຍສານສາທາລະນະ ແລະ ລົດແທັກຊີ;

3. 2,000,000 ກີບ ສຳລັບການບໍ່ລາຍງານສະຖິຕິກ່ຽວກັບ ຖ້ຽວລົດໄຟ, ຈຳນວນ ຜູ້ໂດຍສານ ແລະ ສິນຄ້າ ຂອງຜູ້ໃຊ້ບໍລິການສະຖານີລົດໄຟ;

4. 2,500,000 ກີບ ສຳລັບການບໍ່ແຈ້ງ ລາຄາສິນຄ້າ ແລະ ຄ່າໃຊ້ບໍລິການ;

5. 3,000,000 ກີບ ສຳລັບການບໍ່ຕິດຕັ້ງຕູ້ນ້ຳດື່ມສາທາລະນະ ຫຼື ຕິດຕັ້ງຕູ້ນ້ຳດື່ມສາທາລະນະທີ່ບໍ່ສະອາດ ແລະ ບໍ່ປອດໄພ ຢູ່ໃນອາຄານຜູ້ໂດຍສານ;

6. 3,500,000 ກີບ ສຳລັບການຈັດສັນພື້ນທີ່ໃຫ້ການບໍລິການຢູ່ໃນອາຄານຜູ້ໂດຍສານ ໂດຍບໍ່ປະຕິບັດຕາມປຶ້ມຄູ່ມືສະຖານີລົດໄຟ ທີ່ໄດ້ຮັບຮອງຈາກກະຊວງໂຍທາທິການ ແລະ ຂົນສົ່ງ;

7. 4,000,000 ກີບ ສຳລັບການ ກໍ່ສ້າງ, ຕິດຕັ້ງປ້າຍເອເລັກໂຕຣນິກ ແລະ ປ້າຍໂຄສະນາ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ;

8. 4,500,000 ກີບ ສຳລັບການເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນສະຖານີລົດໄຟ ທີ່ບໍ່ຖືກຕ້ອງຕາມລະບຽບການ;

9. 5,000,000 ກີບ ສຳລັບການບໍ່ຕິດປ້າຍບໍລິສັດ ລົດແທັກຊີ, ລົດຂົນສົ່ງຜູ້ໂດຍສານສາທາລະນະ ແລະ ບໍ່ຕິດຄ່າບໍລິການ;

10. 5,000,000 ກີບ ສໍາລັບການນໍາໃຊ້ ໃບປິວ, ປ່າວຂ່າວ, ໂຄສະນາຊວນເຊື່ອ ທີ່ສ້າງຄວາມເສຍຫາຍຕໍ່ການບໍລິການ ແລະ ຄວາມປອດໄພ;

11. 5,500,000 ກີບ ສໍາລັບການບໍ່ຕິດຕັ້ງລະບົບ ປ້າຍເອເລັກໂຕຣນິກ ຫຼື ວັດຖຸປະກອນ ທີ່ເໝາະສົມໃນການແຈ້ງຂໍ້ມູນກ່ຽວກັບຖ້ຽວລົດໄຟ ໃນອາຄານຜູ້ໂດຍສານ;

12. 10,000,000 ກີບ ສໍາລັບການຊື້ປີ້ລົດໄຟເພື່ອໄປຂາຍຕໍ່ ທີ່ບໍ່ຖືກຕ້ອງຕາມລາຄາກໍານົດໄວ້ ຫຼື ລະບຽບການ;

13. 15,000,000 ກີບ ສໍາລັບການ ຊື້ ຂາຍ ສິນຄ້າເກືອດຫ້າມ ຕາມລະບຽບການ ໃນສະຖານີລົດໄຟ.

## ໝວດທີ 6
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໃນສະຖານີ ແລະ ຂະບວນ ລົດໄຟ

**ມາດຕາ 26 ການລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນສະຖານີລົດໄຟ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນສະຖານີລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 300,000 ກີບ ສໍາລັບການຖິ້ມ ວັດຖຸ, ຂີ້ເຫຍື້ອ ແລະ ສິ່ງເສດເຫຼືອ ບໍ່ຖືກບ່ອນທີ່ກໍານົດໄວ້;

2. 500,000 ກີບ ສໍາລັບການບໍ່ນໍາໃຊ້ມາດຕະການປ້ອງກັນ ຝຸ່ນລະອອງ, ສິ່ງເສດເຫຼືອ ທີ່ເປັນມົນລະພິດໃນເວລາເກັບມ້ຽນ ຫຼື ຂົນສົ່ງ;

3. 500,000 ກີບ ສໍາລັບການສູບຢາບໍ່ຖືກຕາມບ່ອນທີ່ກໍານົດໄວ້;

4. 3,000,000 ກີບ ສໍາລັບການດໍາເນີນທຸລະກິດ ຫຼື ບໍລິການ ທີ່ບໍ່ປະຕິບັດຕາມມາດຕະຖານການປົກປັກຮັກສາສິ່ງແວດລ້ອມຂອງ ຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ;

5. 15,000,000 ກີບ ສໍາລັບການນໍາໃຊ້ ເຄື່ອງກໍາເນີດລັງສີ ແລະ ທາດກໍາມັນຕະພາບລັງສີ ໂດຍບໍ່ໄດ້ຮັບອະນຸຍາດຈາກ ກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 27 ການລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມໃນຂະບວນລົດໄຟ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດລະບຽບການກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ໃນຂະບວນລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 500,000 ກີບ ສໍາລັບການຖິ້ມ ຂີ້ເຫຍື້ອ, ສິ່ງເສດເຫຼືອ ບໍ່ຖືກຕາມບ່ອນທີ່ກໍານົດໄວ້;

2. 3,000,000 ກີບ ສໍາລັບການສູບຢາ.

## ໝວດທີ 7
## ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບລະບົບຄຸ້ມຄອງ ຄວາມປອດໄພ, ເຫດຕິດຂັດ ແລະ ອຸບປະຕິເຫດ ໃນການແລ່ນລົດໄຟ

**ມາດຕາ 28 ການລະເມີດລະບຽບການກ່ຽວກັບລະບົບຄຸ້ມຄອງ ຄວາມປອດໄພໃນການແລ່ນລົດໄຟ**

ນິຕິບຸກຄົນ ທີ່ລະເມີດລະບຽບການຄຸ້ມຄອງຄວາມປອດໄພໃນການແລ່ນລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 5,000,000 ກີບ ສໍາລັບການບໍ່ ຕິດຕາມ ກວດກາ, ປະເມີນລະດັບຄວາມປອດໄພ ຫຼື ບໍ່ລາຍງານຜົນການປະເມີນລະດັບຄວາມປອດໄພໃນການແລ່ນລົດໄຟ;

2. 5,500,000 ກີບ ສໍາລັບການບໍ່ ບູລະນະຮັກສາ ແລະ ສ້ອມແປງ ລະບົບຄຸ້ມຄອງຄວາມປອດໄພໃນການແລ່ນລົດໄຟ ຕາມປຶ້ມຄູ່ມືທີ່ໄດ້ຮັບຮອງຈາກກະຊວງໂຍທາທິການ ແລະ ຂົນສົ່ງ;

3. 6,000,000 ກີບ ສໍາລັບການບໍ່ປະເມີນແຜນການຈັດຕັ້ງປະຕິບັດຄວາມປອດໄພຂອງຖ້ຽວຂະບວນລົດໄຟ;

4. 6,500,000 ກີບ ສໍາລັບການບໍ່ສ້າງລະບົບຄຸ້ມຄອງຄວາມປອດໄພການແລ່ນລົດໄຟ;

5. 10,000,000 ກີບ ສໍາລັບການບໍ່ຈັດຝຶກອົບຮົມກ່ຽວກັບລະບົບຄຸ້ມຄອງຄວາມປອດໄພການແລ່ນລົດໄຟ.

**ມາດຕາ 29 ການລະເມີດລະບຽບການກ່ຽວກັບ ເຫດຕິດຂັດ ແລະ ອຸບປະຕິເຫດ ໃນການແລ່ນລົດໄຟ**

ນິຕິບຸກຄົນ ທີ່ລະເມີດລະບຽບການກ່ຽວກັບ ເຫດຕິດຂັດ ແລະ ອຸບປະຕິເຫດ ໃນການແລ່ນລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 3,000,000 ກີບ ສໍາລັບການບໍ່ລາຍງານ ເຫດຕິດຂັດ ຫຼື ອຸບປະຕິເຫດ;

2. 5,000,000 ກີບ ສໍາລັບການບໍ່ ປະເມີນຄວາມສ່ຽງ, ນໍາໃຊ້ມາດຕະການຫຼຸດຜ່ອນຄວາມສ່ຽງ ຕໍ່ເຫດຕິດຂັດ ແລະ ອຸບປະຕິເຫດ;

3. 10,000,000 ກີບ ສໍາລັບການບໍ່ປະຕິບັດຕາມແຜນ ປ້ອງກັນ ແລະ ຮັບມື ກັບເຫດຕິດຂັດໃນສະຖານີ ແລະ ແລວທາງລົດໄຟ;

4. 15,000,000 ກີບ ສໍາລັບການບໍ່ແຈ້ງ ຫຼັກຖານ ແລະ ຂໍ້ມູນ ກ່ຽວກັບ ເຫດຕິດຂັດ ແລະ ອຸບປະຕິເຫດ;

5. 20,000,000 ກີບ ສໍາລັບການບໍ່ປົກປັກຮັກສາ ແລະ ປ້ອງກັນ ຊາກລົດໄຟ, ຊິ້ນສ່ວນ ຫຼື ສ່ວນປະກອບ, ວັດຖຸປະກອນ ແລະ ເຄື່ອງຂອງ.

**ມາດຕາ 30 ການລະເມີດລະບຽບການກ່ຽວກັບອຸປະກອນທີ່ນໍາໃຊ້ໃນລົດໄຟ**

ນິຕິບຸກຄົນ ທີ່ລະເມີດລະບຽບການກ່ຽວກັບ ລົດໄຟຂົນສົ່ງຜູ້ໂດຍສານ ທີ່ບໍ່ ປະກອບ ແລະ ຕິດຕັ້ງອຸປະກອນທີ່ນໍາໃຊ້ໃນລົດໄຟ ຈະຖືກປັບໃໝ 5,000,000 ກີບ ຕາມແຕ່ລະລາຍການ ດັ່ງນີ້:

1. ເຄື່ອງວັດແທກ, ເຄື່ອງບັນທຶກ ຄວາມໄວ ແລະ ຂໍ້ມູນ ຂ່າວສານ ກ່ຽວກັບການເຄື່ອນໄຫວຂອງລົດໄຟ;

2. ຄ້ອນທຸບສຸກເສີນ, ອຸປະກອນດັບເພີງ, ເຄື່ອງມືສ້ອມແປງ ແລະ ຖົງຢາປະຖົມພະຍາບານ;

3. ເຄື່ອງເຕືອນໄພສໍາລັບຜູ້ຂັບຂີ່ລົດໄຟ;

4. ໜ່ວຍວັດແທກຄວາມໄວ ແລະ ເຄື່ອງສື່ສານ ໃນຫ້ອງເຮັດວຽກຂອງຜູ້ຂັບຂີ່ລົດໄຟ;

5. ລະບົບແສງສະຫວ່າງ, ຄວາມເຢັນ, ລະບາຍອາກາດ, ສຸຂາພິບານ ແລະ ສິ່ງອໍານວຍຄວາມສະດວກສໍາລັບ ຄົນພິການ, ຜູ້ເສຍອົງຄະ, ນັກບວດ, ແມ່ມານ, ເດັກນ້ອຍ, ຜູ້ເຖົ້າ ໃນຕູ້ຜູ້ໂດຍສານ.

# ໝວດທີ 8
# ການປັບໃໝຕໍ່ຜູ້ລະເມີດລະບຽບການກ່ຽວກັບ ຜູ້ໂດຍສານ ແລະ ການດຳເນີນທຸລະກິດການລົດໄຟ

**ມາດຕາ 31 ການລະເມີດລະບຽບການກ່ຽວກັບຜູ້ໂດຍສານ**

ຜູ້ໂດຍສານ ທີ່ລະເມີດລະບຽບການກ່ຽວກັບຜູ້ໂດຍສານ ຈະຖືກປັບໃໝ ດັ່ງນີ້:

1. 200,000 ກີບ ສຳລັບການ ແຂວນ, ຢືນ, ນັ່ງ ຢູ່ຈຸດເຊື່ອມຕໍ່ກັນລະຫວ່າງ ຕູ້ກັບຕູ້ ແລະ ຕູ້ກັບຫົວຈັກລົດໄຟ ຊຶ່ງເປັນການກີດຂວາງເຈົ້າໜ້າທີ່ປະຕິບັດການ ຫຼື ຜູ້ໂດຍສານອື່ນ ໃນຂະບວນລົດໄຟ;

2. 500,000 ກີບ ສຳລັບການໃຊ້ສຽງດັງເກີນຄວນທີ່ເປັນການລົບກວນຜູ້ໂດຍສານອື່ນ ໃນຂະບວນລົດໄຟ;

3. 500,000 ກີບ ສຳລັບການ ຍ່າງ, ຢືນ, ນັ່ງ, ນອນ ເທິງຫຼັງຄາ ຕູ້ລົດໄຟ ແລະ ຫົວຈັກລົດໄຟ ໃນຂະບວນລົດໄຟ;

4. 1,000,000 ກີບ ສຳລັບການ ເຂົ້າ-ອອກ ຕູ້ລົດໄຟ ໂດຍບໍ່ໄດ້ຮັບອະນຸຍາດຈາກພະນັກງານບໍລິການຕູ້ລົດໄຟ;

5. 1,500,000 ກີບ ສຳລັບການຍື່ນ ຫົວ, ແຂນ, ຂາ ແລະ ວັດຖຸອື່ນ ອອກນອກຕູ້ລົດໄຟ ໃນເວລາທີ່ລົດໄຟກຳລັງແລ່ນ;

6. 2,000,000 ກີບ ຕາມແຕ່ລະກໍລະນີ ດັ່ງນີ້:

- ນຳເອົາ ສິນຄ້າເກືອດຫ້າມ, ສັດທີ່ເປັນໂລກລະບາດ ແລະ ສັດປ່າ ເຂົ້າໃນສະຖານີລົດໄຟ;
- ກໍ່ຄວາມບໍ່ສະຫງົບ, ຜິດຖຽງ ຫຼື ຕີກັນ ຢູ່ໃນ ຂະບວນ ຫຼື ສະຖານີ ລົດໄຟ;
- ນຳເອົາເຄື່ອງດື່ມມີທາດເຫຼົ້າທຸກປະເພດເຂົ້າໄປດື່ມໃນຂະບວນລົດໄຟ;
- ຫຼິ້ນການພະນັນທຸກປະເພດໃນຂະບວນລົດໄຟ;

7. 5,000,000 ກີບ ສຳລັບການນຳເອົາ ທາດເຄມີ ແລະ ວັດຖຸໄວໄຟ ເຂົ້າໃນສະຖານີລົດໄຟ;

8. 10,000,000 ກີບ ສຳລັບການເປີດປະຕູ ຂຶ້ນ-ລົງ ຕູ້ລົດໄຟ ໃນເວລາທີ່ລົດໄຟກຳລັງແລ່ນ.

**ມາດຕາ 32 ການລະເມີດລະບຽບການກ່ຽວກັບການດຳເນີນທຸລະກິດການລົດໄຟ**

ຜູ້ດຳເນີນທຸລະກິດການລົດໄຟ ທີ່ລະເມີດລະບຽບການກ່ຽວກັບການດຳເນີນທຸລະກິດການລົດໄຟ ຈະຖືກປັບໃໝ ດັ່ງນີ້:

1. 20,000,000 ກີບ ສຳລັບການ ຂຸດ, ກອງ ຫຼື ຖົມ ດິນ ຢູ່ໃນພື້ນທີ່ ທີ່ບໍ່ໄດ້ກຳນົດໃຫ້ດຳເນີນການກໍ່ສ້າງທາງລົດໄຟ;

2. 25,000,000 ກີບ ສຳລັບການນຳໃຊ້ ລົດໄຟທີ່ບໍ່ມີໃບຢັ້ງຢືນການກວດກາເຕັກນິກ, ໃບອະນຸຍາດແລ່ນລົດໄຟ ຫຼື ນຳໃຊ້ໃບອະນຸຍາດແລ່ນລົດໄຟທີ່ໝົດອາຍຸ;

3. 30,000,000 ກີບ ສຳລັບການດຳເນີນທຸລະກິດບໍ່ຖືກຕ້ອງຕາມປະເພດທຸລະກິດ ທີ່ໄດ້ຮັບອະນຸຍາດ, ບໍ່ມີໃບອະນຸຍາດດຳເນີນທຸລະກິດ ຫຼື ນຳໃຊ້ໃບອະນຸຍາດດຳເນີນທຸລະກິດໝົດອາຍຸ;

4. 50,000,000 ກີບ ສຳລັບການເອົາໃບອະນຸຍາດດຳເນີນທຸລະກິດຂອງຕົນ ໃຫ້ຜູ້ອື່ນນຳໃຊ້;

5. 80,000,000 ກີບ ສຳລັບການດຳເນີນການກໍ່ສ້າງ ໂດຍບໍ່ໄດ້ມາດຕະການປ້ອງກັນຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ;

6. 100,000,000 ກີບ ສຳລັບການກໍ່ສ້າງໂດຍບໍ່ຖືກຕ້ອງຕາມແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດ ໝາຍເຕັກນິກ ແລະ ມາດຕະຖານເຕັກນິກລົດໄຟ.

## ໝວດທີ 9
## ມາດຕະການອື່ນຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການກ່ຽວກັບການລົດໄຟ

### ມາດຕາ 33 ມາດຕະການຕໍ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ ຊຶ່ງມີລັກສະນະເບົາ ບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ສ້າງຄວາມເສຍຫາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພໃນການແລ່ນລົດໄຟ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ໃນກໍລະນີ ຫາກມີການລະເມີດຊໍ້າ ທີ່ພາໃຫ້ເກີດຄວາມສ່ຽງ, ເປັນໄພຂົ່ມຂູ່, ສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍ ຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພໃນການແລ່ນລົດໄຟ ຈະຖືກປັບໃໝ ໃນອັດຕາຕາມກໍລະນີທີ່ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນ ດຳລັດສະບັບນີ້ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 34 ມາດຕະການຕໍ່ຜູ້ດຳເນີນທຸລະກິດການລົດໄຟ

ຜູ້ດຳເນີນທຸລະກິດການລົດໄຟ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ ຊຶ່ງມີລັກສະນະເບົາ ບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ສ້າງຄວາມເສຍຫາຍຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການແລ່ນລົດໄຟ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ໃນກໍລະນີ ຫາກມີການລະເມີດຊໍ້າ ທີ່ພາໃຫ້ເກີດຄວາມສ່ຽງ, ເປັນໄພຂົ່ມຂູ່, ສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການແລ່ນລົດໄຟ ຈະຖືກປັບໃໝ ໃນອັດຕາຕາມກໍລະນີທີ່ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ນອກຈາກນີ້ຍັງຈະຖືກ ໂຈະ ຫຼື ຍົກເລີກ ຖ້ຽວຂະບວນລົດໄຟ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດການລົດໄຟ ພ້ອມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 35 ມາດຕະການຕໍ່ພະນັກງານປະຕິບັດການແລ່ນລົດໄຟ

ພະນັກງານປະຕິບັດການແລ່ນລົດໄຟ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການແລ່ນລົດໄຟ ຊຶ່ງມີລັກສະນະເບົາ ບໍ່ເປັນການກະທຳຜິດທາງອາຍາ ແລະ ບໍ່ສ້າງຄວາມເສຍຫາຍຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການແລ່ນລົດໄຟ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ໃນກໍລະນີ ຫາກມີການລະເມີດຊໍ້າ ທີ່ພາໃຫ້ເກີດຄວາມສ່ຽງ, ເປັນໄພຂົ່ມຂູ່, ສ້າງຄວາມເສຍຫາຍ ແລະ ເປັນອັນຕະລາຍຕໍ່ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພການແລ່ນລົດໄຟ ຈະຖືກປັບໃໝ ໃນອັດຕາຕາມກໍລະນີທີ່ໄດ້ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ນອກຈາກນີ້ຍັງຈະຖືກ ໂຈະການປະຕິບັດໜ້າທີ່ ພ້ອມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 36 ມາດຕະການຕໍ່ຜູ້ລະເມີດໃນສະຖານດຽວກັນຫຼາຍຄັ້ງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຖ້າຫາກລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລົດໄຟ ແລະ ລະບຽບການອື່ນທີ່ກ່ຽວກັບຄວາມປອດໄພທາງລົດໄຟ ໃນສະຖານດຽວກັນຫຼາຍຄັ້ງ ຈະຖືກປັບໃໝ ແລະ ນຳໃຊ້ມາດຕະການອື່ນ ດັ່ງນີ້:

1. ການລະເມີດຄັ້ງທີ ສອງ ຈະຖືກປັບໃໝ ສອງ ເທົ່າຂອງອັດຕາປັບໃໝ;

2. ການລະເມີດເປັນຄັ້ງທີ ສາມ ຈະຖືກປັບໃໝ ສາມ ເທົ່າ ຂອງອັດຕາປັບໃໝ ແລະ ຖ້າຫາກເປັນຫົວໜ່ວຍທຸລະກິດແມ່ນ ຍຶດ, ຖອນ ໃບອະນຸຍາດດຳເນີນທຸລະກິດ ແລະ ຖືກປະຕິບັດຕາມ ປະມວນກົດໝາຍອາຍາ.

**ມາດຕາ 37 ມາດຕະການຕໍ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລັກໄຟ ຈະຖືກລົງວິໄນ ຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 10
## ການຈັດຕັ້ງປະຕິບັດການປັບໃໝ ແລະ ການນຳໃຊ້ມາດຕະການອື່ນ

**ມາດຕາ 38 ການຈັດຕັ້ງປະຕິບັດການປັບໃໝ**

ເຈົ້າໜ້າທີ່ກວດກາການແລ່ນລັກໄຟ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ການປັບໃໝຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລັກໄຟ ໂດຍປະສານສົມທົບກັບຕຳຫຼວດລັກໄຟ ກະຊວງປ້ອງກັນຄວາມສະຫງົບ ຕາມ ກົດໝາຍ ແລະ ລະບຽບການ.

**ມາດຕາ 39 ການນຳໃຊ້ມາດຕະການອື່ນ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳໃຊ້ມາດຕະການອື່ນ ຕາມ ກົດໝາຍ ແລະ ລະບຽບການ.

## ໝວດທີ 11
## ການ ຊຳລະ, ຄຸ້ມຄອງ ແລະ ນຳໃຊ້ ເງິນປັບໃໝ

**ມາດຕາ 40 ການຊຳລະເງິນປັບໃໝ**

ຜູ້ທີ່ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລັກໄຟ ຕ້ອງຊຳລະເງິນປັບໃໝ ຕາມອັດຕາຂອງການລະເມີດ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ໂດຍຊຳລະຜ່ານ ທະນາຄານ, ໄປສະນີ, ຈຸດບໍລິການຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 41 ການຄຸ້ມຄອງເງິນທີ່ໄດ້ຈາກການປັບໃໝ**

ເງິນປັບໃໝທີ່ໄດ້ຈາກການລະເມີດດຳລັດສະບັບນີ້ ຫົກສິບ ສ່ວນຮ້ອຍ (60%) ມອບເຂົ້າງົບປະມານແຫ່ງລັດ ແລະ ສີ່ສິບ ສ່ວນຮ້ອຍ (40%) ມອບເງິນເຂົ້າກອງທຶນຄວາມປອດໄພທາງລັກໄຟ ເພື່ອນຳໃຊ້ບໍລິຫານວຽກງານ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 42 ຂອງດຳລັດສະບັບນີ້.

**ມາດຕາ 42 ເປົ້າໝາຍການນຳໃຊ້ເງິນປັບໃໝ**

ເປົ້າໝາຍການນຳໃຊ້ເງິນປັບໃໝ ເຂົ້າໃນວຽກງານການປ້ອງກັນຄວາມປອດໄພທາງລັກໄຟ ໃຫ້ປະຕິບັດ ດັ່ງນີ້:

1. ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານ ການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການລັກໄຟ;

2. ນຳໃຊ້ເຂົ້າວຽກງານບໍລິຫານ, ໂຄສະນາ ເຜີຍແຜ່ ນິຕິກຳ, ປຶ້ມຄູ່ມື, ຈັດຝຶກອົບຮົມ ດ້ານວິຊາການກ່ຽວກັບວຽກງານຄວາມປອດໄພທາງລັກໄຟ;

3. ຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກ ກ່ຽວກັບວຽກງານ ຄວາມປອດໄພ ແລະ ການປ້ອງກັນຄວາມປອດໄພທາງລົດໄຟ.

4. ລົງເຄື່ອນໄຫວ ແລະ ແກ້ໄຂ ວຽກງານຄວາມປອດໄພທາງລົດໄຟ.

## ໝວດທີ 12
## ບົດບັນຍັດສຸດທ້າຍ

**ມາດຕາ 43 ການຈັດຕັ້ງປະຕິບັດ**

ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 44 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 29 ມັງກອນ 2026 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

**ສອນໄຊ ສີພັນດອນ**